## ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດ ທີ 15 ເມສາ 2007 (4-15-2007)

---

## ຖ່ອມຕົວຮັບໃຊ້?

**ຂໍ້ພຣະຄັມພີໃນບົດຮຽນ:** ໂຢຮັນ 13:1,3-10,12-17.

**ຄຳຖາມແຫ່ງຊີວິດ:** ເປັນຫຍັງຄຣິສຕຽນຈຶ່ງຮັບໃຊ້ຄົນອື່ນ?

**ພຣະຄັມພີແຫ່ງຄວາມຈິງ:** ເພາະວ່າອົງພຣະເຢຊູຕ້ອງການໃຫ້ຜູ້ທີ່ຕິດຕາມພຣະອົງຖ່ອມຕົວ ຮັບໃຊ້ຄົນອື່ນ ເໝືອນພຣະອົງໄດ້ເຮັດມາແລ້ວ.

**ຜົນສະທ້ອນຕໍ່ຊີວິດ:** ບົດຮຽນນີ້ໄດ້ຂຽນຂຶ້ນມາເພື່ອຊ່ວຍທ່ານໃຫ້ຄົ້ນພົບວ່າອົງພຣະເຢຊູຕ້ອງການຫຍັງ ຈາກເຮົາ:

- ຮູ້ຈັກວ່າພຣະເຢຊູໄດ້ອວຍພຣະພອນແກ່ຜູ້ຕິດຕາມ ຜູ້ຖ່ອມຕົວຮັບໃຊ້ຄົນອື່ນເໝືອນພຣະອົງໄດ້ເຮັດມາ
- ຕ້ອງການໃຫ້ພຣະເຢຊູອວຍພຣະພອນໃຫ້ຈຳເປັນຕ້ອງຖ່ອມຕົວຮັບໃຊ້ຄົນອື່ນເໝືອນພຣະອົງໄດ້ເຮັດມາ.

ທ່ານໄດ້ສັງເກດເບິ່ງບໍ່ວ່າໃນໂລກນີ້ໄດ້ວັດແທກຄວາມຍິ່ງໃຫຍ່ຄືຄົນນຶ່ງເປັນຄົນຮັບຈ້າງຂອງຄົນອື່ນ. ໃນສັງຄົມເຮົາແມ່ນອັນໃດເປັນຄວາມຕ້ອງການ ຕັດຫຍ້າເດີ່ນບ້ານຂອງຕົນເອງ ຫລືຈ້າງຄົນອື່ນມາຕັດ? ອັນໃດໄດ້ໝ້າດີ ຊັກເຄື່ອງຕົນເອງ ຫລືສົ່ງເຂົ້າຮ້ານ? ການໃຊ້ຄົນອື່ນເປັນສັນຍາລັກຂອງຄວາມຮັ່ງມີ ແລະມີຊື່ສຽງ. ຄວາມຈິງຈະຈ້າງຄົນອື່ນຕັດຫຍ້າ ຫລືຊັກເຄື່ອງໃຫ້ກໍບໍ່ຜິດຫຍັງ, ແຕ່ເຫັນວ່າອັນໃດສຳຄັນໃນສາຍພຣະເນດຂອງພຣະເຈົ້າ, ຮັບໃຊ້ຄົນອື່ນ ຫລືໃຊ້ຄົນອື່ນ?

ໃນເມື່ອທ່ານໄດ້ສຶກສາບົດຮຽນນີ້, ທ່ານຈະໄດ້ພົບເຫັນວ່າພຣະພອນຂອງພຣະເຈົ້າໄດ້ເຂົ້າມາໃນການຮັບໃຊ້ຄົນອື່ນ ເໝືອນອົງພຣະເຢຊູໄດ້ກະທຳມາແລ້ວ. ພຣະອົງມີພຣະປະສົງຢາກໃຫ້ທ່ານໄດ້ຮັບພຣະພອນໂດຍເອົາຕົວຢ່າງຂອງພຣະອົງຄືໃຫ້ຖ່ອມຕົວຮັບໃຊ້ຄົນອື່ນ.

## ສຶກສາພຣະຄັມພີ

### 1. ຕົວຢ່າງທີ່ປະເສີດ (ໂຢຮັນ 13:1,3,5)

ວັນພະຫັດຕອນຄ່ຳເປັນຄືນສຸດທ້າຍຂອງພຣະຄຣິດ. ພຣະອົງຊົງຮູ້ແລ້ວວ່າ ວັນເວລາໄດ້ເຂົ້າມາໃກ້ແລ້ວ. ມະນຸດທັມະດາມັກຊອກຫາກຽດ. ພວກເຮົາສ່ວນຫລາຍມັກໃຊ້ຄົນອື່ນ ແລະຢາກໃຫ້ຜູ້ອື່ນຮູ້ຄຸນຄ່າຂອງຕົນ. ແຕ່ພຣະເຢຊູໄດ້ເຮັດສິ່ງກົງກັນຂ້າມ. ພຣະອົງກະທຳຕາມທີ່ພຣະອົງໄດ້ກະທຳເວລາພຣະອົງຢູ່ໃນໂລກ. ພຣະອົງຊົງຮັກໄພ່ພົນຂອງພຣະອົງຜູ້ຢູ່ໃນໂລກນີ້. ພຣະອົງສະແດງເຖິງຄວາມຮັກດ້ວຍການຍອມຖ່ອມຕົວຮັບໃຊ້ຄົນອື່ນ.

ພຣະເຢຊູຮູ້ວ່າເວລາຂອງພຣະອົງທີ່ຢູ່ໃນໂລກນີ້ສັ້ນ, ພຣະອົງຮູ້ວ່າພຣະອົງເປັນຜູ້ສັກສິດແລະມີອຳນາດ. ຖ້າຜູ້ໃດຜູ້ນຶ່ງສົມຄວນທີ່ໃຫ້ຜູ້ອື່ນຮັບໃຊ້ກໍແມ່ນພຣະເຢຊູຜູ້ດຽວ. ພຣະອົງຮູ້ຈັກວ່າພຣະອົງເປັນຜູ້ສັກສິດ ແລະພຣະອົງມາຈາກພຣະເຈົ້າ. ຈຸດສຸດທ້າຍຢູ່ໃນຄວາມນຶກຄິດຂອງພຣະອົງຕລອດມາ ວ່າວັນນຶ່ງພຣະອົງຈະສະເດັດຄືນໄປຫາພຣະບິດາ. ທ່ານແລະຂ້າພະເຈົ້າອາດຮັບເອົາສິດອຳນາດ, ເປັນຜູ້ສຳຄັນ, ແລະມີບ່ອນໄປສຸດທ້າຍເພາະຄົນອື່ນໄດ້ຮັບໃຊ້ເຮົາ. ພຣະເຢຊູເອົາສິ່ງເຫລົ່ານີ້ຈາກສິ່ງກົງກັນຂ້າມ. ພຣະເຢຊູໄດ້ເອົານ້ຳໃສ່ອ່າງແລະເລີ້ມຕົນລ້າງຕີນຂອງພວກສາວົກ.

ໃນສມັຍພຣະເຢຊູຢູ່ໃນໂລກນີ້ ຖນົນຫົນທາງບໍ່ໄດ້ປູຢາງ. ຜູ້ໃດທີ່ເດີນທາງໂດຍຍ່າງໄປຕາມຫົນທາງນັ້ນ ຂີ້ຝຸ່ນຫລືຂີ້ຕົມໄດ້ຕິດຕີນເຮັດໃຫ້ເປື້ອນ. ຕາມປົກກະຕິແລ້ວ ພວກຄົນໃຊ້ມີໜ້າທີ່ລ້າງຕີນຂອງແຂກຜູ້ເຂົ້າໄປໃນເຮືອນ. ແຕ່ເວລານີ້ບໍ່ມີຄົນໃຊ້ເຮັດໜ້າທີ່ ແລະພວກສາວົກກໍບໍ່ມີຜູ້ໃດສມັກເປັນຄົນຮັບໃຊ້. ກົງກັນຂ້າມ ພວກເຂົາໄດ້ໂຕ້ຖຽງກັນວ່າແມ່ນໃຜເປັນໃຫຍ່ໃນຖ້າມກາງພວກເຂົາ (ລູກາ 22:24). ເປັນໜ້າແປກ, ຜູ້ໃຫຍ່ສຸດໃນຖາມກາງເຂົາຄືພຣະເຢຊູຍອມຮັບເອົາໜ້າທີ່ຕໍ່າ.

ທ່ານລອງວາດພາບເບິ່ງວ່າມັນເປັນຜົນສະທ້ອນຕໍ່ພວກສາວົກຢ່າງໃດ ໂດຍສະເພາະແລ້ວແມ່ນ ໂຢຮັນ, ຜູ້ຂຽນປື້ມຂ່າວປະເສີດເລັ້ມທີ 4 ? ໂຢຮັນໄດ້ອະທິບາຍຢ່າງແຈ່ມແຈ້ງວ່າ ພຣະເຢຊູລຸກຈາກໂຕະ ແກ້ເຄື່ອງທົງຊັ້ນນອກອອກ, ເອົາຜ້າມາພັນແອວ ເໝືອນກັບວ່າເຫດການທີ່ເກີດຂື້ນນັ້ນໄດ້ຈົດຈໍາຢູ່ໃນສມອງຂອງໂຢຮັນ.

ພຣະຜູ້ໂຜດໃຫ້ພົ້ນອົງຍິ່ງໃຫຍ່ໃນໂລກໄດ້ຍອມຖ່ອມຕົວລົງຮັບໃຊ້ກຸ່ມຄົນຜູ້ຕ້ອງການໃຫ້ຄົນອື່ນຮັບໃຊ້. ຂໍໃຫ້ອົງພຣະວິນຍານຈົດບັນທຶກພາບພົດນັ້ນໄວ້ໃນໃຈຂອງພວກເຮົາ ເພື່ອເຮົາຈະໄດ້ຕິດຕາມຕົວຢ່າງອັນປະເສີດຄືການຖ່ອມຕົວຮັບໃຊ້ຄົນອື່ນ.

## 2. ການຕອບສນອງຢ່າງທັມະຊາດ (ໂຢຮັນ 13:6-10)

ໃນເມື່ອພຣະເຢຊູຈະມາລ້າງຕີນຂອງເປໂຕ, ເປໂຕຖາມພຣະອົງວ່າ ຖ້າພຣະອົງຈະລ້າງຕີນຂອງລາວ. ໃນພາສາກຣີກເປັນປໂຍກທີ່ໃຊ້ຄໍາເວົ້າຊໍ້າເຖິງຄວາມສໍາຄັນຂອງຕົນເອງ. "ຂ້ານ້ອຍບໍ່ສົນວ່າຄົນອື່ນຈະອະນຸຍາດໃຫ້ພຣະອົງເຮັດຕໍ່ເຂົາຢ່າງໃດ. ແຕ່ຂ້ານ້ອຍຈະບໍ່ອະນຸຍາດໃຫ້ພຣະອົງລ້າງຕີນ." ການທີ່ເປໂຕຄິດຢ່າງນີ້ເປັນການສະແດງອອກຈາກໃຈອັນດີ, ແຕ່ເປັນການຜິດຕໍ່ການເປັນສາວົກຂອງພຣະເຢຊູ.

ເປໂຕບໍ່ທັນໄດ້ເຂົ້າໃຈເຖິງຄວາມໝາຍທີ່ພຣະເຢຊູໄດ້ລ້າງຕີນສາວົກໃນເວລານັ້ນ. ພຣະເຢຊູໄດ້ແປງຄໍາເວົ້າຂອງເປໂຕ ໂດຍເວົ້າວ່າ ຫລັງຈາກນີ້ເປໂຕຈະເຂົ້າໃຈເຖິງການຖ່ອມໃຈລົງເພື່ອຮັບໃຊ້. ການເຕືອນຢ່າງສຸພາບໄດ້ເຮັດໃຫ້ເປໂຕບໍ່ປະຕິເສດ. ທ່ານຈະບໍ່ລ້າງຕີນຂອງຂ້ານ້ອຍຈັກເທື່ອ! ອົງພຣະເຢຊູໄດ້ຕອບການທ້າທາຍຂອງເປໂຕ. ການທີ່ບໍ່ຍອມຖ່ອມຕົວຮັບໃຊ້ທີ່ເປັນພາກສ່ວນຂອງພຣະເຢຊູ ໝາຍຄວາມວ່າບໍ່ໄດ້ມີພາກສ່ວນກັບພຣະອົງເລີຍ. ຖ້າວ່າເປໂຕບໍ່ຍອມຮັບການກະທໍາຂອງພຣະເຢຊູ, ເຂົາກໍມີພາກສ່ວນຂອງພຣະຄຣິດໃນໂລກນີ້ບໍ່ໄດ້.

ເປໂຕບໍ່ໄດ້ຄິດ ແລະກະທໍາຢ່າງນີ້ຄົນດຽວ. ພວກເຮົາຄືກັນອາດຖາມເຖິງພາຣະກິດຂອງພຣະເຈົ້າ ແລະເອົາລາຍການຂອງເຮົາໃຫ້ພຣະເຈົ້າເຮັດຕາມ. ຫລາຍໆເທື່ອພວກເຮົາບັງຄັບໃຫ້ພຣະເຈົ້າເຮັດວຽກໃນບ່ອນທີ່ເຮົາຕ້ອງການ ແລະໃນສະພາບອື່ນໆ. ເມື່ອເຮັດຢ່າງນີ້ ເຮົາກໍລືມໄປວ່າໃຜເປັນຜູ້ຈັດການ ມີບາງຄົນໄດ້ກ່າວວ່າ, "ພຣະເຈົ້າຊົງເປັນພຣະເຈົ້າ. ພຣະອົງບໍ່ໄດ້ສມັກເຮັດວຽກ."

ທ່ານຕ້ອງການເປັນພາກສ່ວນຂອງພຣະເຈົ້າໃນໂລກນີ້ບໍ່? ເພື່ອເປັນກຽດໃຫ້ເປໂຕ, ເພິ່ນໄດ້ດັດແປງຢ່າງວ່ອງໄວ- ເຖິງແມ່ນວ່າເພິ່ນຍັງບໍ່ທັນເຂົ້າໃຈດີຕໍ່ຄໍາຕອບຂອງພຣະເຢຊູ. ຄໍາຕອບທີ່ພຣະເຢຊູໃຫ້ເປໂຕ ພຣະອົງກໍຍັງໃຫ້ພວກເຮົາໃນເວລານີ້ຄືກັນ. ຜູ້ທີ່ເຊື່ອໄດ້ຖືກລ້າງແລ້ວໃນພຣະເຢຊູ, ໄດ້ຖືກລ້າງດ້ວຍພຣະໂລຫິດເທິງໄມ້ກາງແຂນ, ແຕ່ພວກເຮົາຕ້ອງການໃຫ້ພຣະອົງລ້າງຄວາມຜິດແຕ່ລະວັນ ຄວາມເຫັນແກ່ຕົວ ແລະກິຣິຍາຊົ່ວຊ້າ ບາບໜາ.

ໃຫ້ເຮົາໃຊ້ເວລາຢູ່ຊ້ອງພຣະພັກຂອງພຣະເຢຊູ, ໃຫ້ພຣະອົງຊໍາຣະລ້າງຄວາມນຶກຄິດຢ່າງໂລກ ແລະເອົາຄວາມນຶກຄິດອັນດີເຂົ້າມາ ເພື່ອເຮົາຈະສາມາດຮັບໃຊ້ໄດ້. ຂໍໃຫ້ມີຄວາມຊົງຈໍາວ່າພຣະເຢຊູໄດ້ລ້າງຕີນຂອງພວກສາວົກຊໍາຣະລ້າງຄວາມຜິດບາບ, ຄວາມຈອງຫອງ, ແລະສິ່ງທີ່ບັງທ່ານໄວ້ບໍ່ໃຫ້ທ່ານເອົາຕົວຢ່າງຂອງພຣະເຢຊູ. ການຖ່ອມຕົວຈະນໍາໄປສູ່ການຮັບໃຊ້ທີ່ເກີດຜົນຂອງຄຣິສຕຽນ. ການຖ່ອມຕົວແມ່ນຍອມໃຫ້ພຣະເຢຊູລ້າງຕີນ ເພື່ອຈະໄດ້ສະອາດໝົດສິ້ນ. ທຸກມື້ນີ້ກໍເຊັ່ນດຽວກັນ, ບໍ່ຕ້ອງການອັນໃດອີກນອກເໜືອຍອມໃຫ້ພຣະເຢຊູລ້າງຕີນ.

## 3. ພຣະພອນອັນສັກສິດ (ໂຢຮັນ 13:12-17)

ເຫດການເກີດຂື້ນຕ້ອງການໃຫ້ມີຄົນແປ. ນັກຂ່າວທຸກມື້ນີ້ໄດ້ເຮັດໄປຫລາຍກວ່າເອົາຂ່າວເຖິງເຫດການທີ່ເກີດ

ຂື້ນປະຈຳວັນ. ອົງພຣະເຢຊູບໍ່ໄດ້ຖາມເພື່ອຢາກ ຈະຮູ້ຂ່າວໜຍັງອີກໃນເມື່ອພຣະອົງຖາມວ່າ, "**ທ່ານເຂົ້າໃຈກັບສິ່ງທີ່ເຮົາໄດ້ເຮັດຕໍ່ທ່ານບໍ່?**" ພຣະອົງຕ້ອງການຮູ້ວ່າພວກສາວົກເຂົ້າໃຈເຖິງຄວາມສຳຄັນໃນການຖ່ອມຕົວຮັບໃຊ້.

ພວກສາວົກຍອມຮັບຮູ້ ແລະເອີ້ນພຣະເຢຊູວ່າເປັນ **ພຣະອາຈານ** ແລະ**ພຣະອົງເຈົ້າ**. ເປັນ**ພຣະອາຈານ**ນັ້ນເປັນການຖືກຕ້ອງດີຕາມຕາມຄວາມຄິດຂອງອົງພຣະບິດາເຈົ້າ ຜູ້ໄດ້ເປີດເຜີຍລັກສະນະຂອງອົງພຣະຜູ້ສ້າງ. **ພຣະອົງເຈົ້າ** ເປັນຜູ້ສັກສິດເທົ່າທຽມກັບພຣະບິດາເຈົ້າ. ທຸກມື້ນີ້ຄົນທັງຫລາຍກໍຍອມຮັບວ່າພຣະອົງມີສະພາບດັ່ງນັ້ນ. ແລະພຣະເຢຊູກໍຕອບວ່າ, "**ນີ້ເປັນການຖືກຕ້ອງ, ທີ່ເຮົາເປັນ.**"

ແມ່ນຫຍັງທີ່ເຮົາຈະສລູບໄດ້ຈາກຄືນສຸດທ້າຍທີ່ອົງພຣະເຢຊູມີຊີວິດໃນໂລກ? ອີກເທື່ອນຶ່ງ ພຣະອົງໄດ້ເຕືອນພວກສາວົກວ່າພຣະອົງເປັນພຣະອົງເຈົ້າ ແລະພຣະອາຈານ, ການທີ່ປ່ຽນເອົາພຣະອົງເຈົ້າຂື້ນໜ້າເປັນການຢ້ຳເຖິງສິດທິ. ຕໍ່ທຸກໆຄົນທີ່ຍອມຢູ່ໃຕ້ອຳນາດ, ພຣະຄຣິດໄດ້ສອນວ່າ, ທ່ານຄວນຈະຮັບໃຊ້ລ້າງຕີນຄົນອື່ນເໝືອນກັນ. ພຣະອົງໄດ້ເຮັດໃຫ້ເປັນຕົວຢ່າງສຳລັບພວກສາວົກເພື່ອຈະປະຕິບັດສືບຕໍ່. ພວກເຮົາຕ້ອງລະມັດລະວັງເຣື່ອງການລ້າງຕີນ. ໃນສມັຍພຣະເຢຊູການລ້າງຕີນເປັນສິ່ງທີ່ຈຳເປັນຕ້ອງເຮັດເປັນປະຈຳ. ແຕ່ທຸກມື້ນີ້ສະພາບການໄດ້ມີການປ່ຽນແປງ ແຕ່ຍັງເປັນທາງຮັບພຣະພອນຢູ່ສເມີ. ພວກເຮົາຕ້ອງສົນໃຈໃນເຣື່ອງທາງໃນ ຄືມີຈິດໃຈທີ່ຖ່ອມລົງ, ອົາຕົວຢ່າງຂອງພຣະເຢຊູມາໃຊ້ໃນຊີວິດ, ຍອມຮັບເອົາອັນໃດກໍໄດ້ ແທນ "ຜ້າເຊັດໜ້າ" ແລະ "ອ່າງນ້ຳ" ເພື່ອໃຫ້ເປັນເຄື່ອງຊ່ວຍໃຫ້ມະນຸດໄດ້ຮັບສິ່ງທີ່ເຂົາຕ້ອງການໃນຊີວິດ.

ພວກເຮົາຄວນມີຄວາມເຂົ້າໃຈເຖິງການເປັນ**ຂ້າທາດ**ຂອງພຣະເຈົ້າ ແລະເປັນ**ຜູ້ນຳຂ່າວປະເສີດ**. ການຮັບໃຊ້ເປັນເຄື່ອງມືເພື່ອຈະໃຫ້ປະຕູເປີດຕ້ອນຮັບພຣະພອນ. ໃນເມື່ອພວກເຮົາໄດ້ສະແດງຄວາມຮັກຂອງພຣະຄຣິດຕໍ່ຄົນອື່ນແລ້ວ, ໃນທີ່ສຸດພວກເຮົາກໍໄດ້ເຫັນວ່າຄົນເຫລົ່ານັ້ນຍອມຮັບຟັງເຣື່ອງຂ່າວປະເສີດສິ່ງທີ່ເຮົາໄດ້ເປັນພະຍານນັ້ນ.

ຜູ້ທີ່ຕິດຕາມພຣະຄຣິດຍອມຖ່ອມຕົວຮັບເອົາຕົວຢ່າງຂອງພຣະເຢຊູທີ່ຮັບໃຊ້ຄົນອື່ນ ທີ່ສຸດກໍໄດ້ຮັບພຣະພອນ. ແນວໃດກໍດີ ພຣະພອນນັ້ນໄດ້ພົບເຫັນຢູ່ລະຫວ່າງການຮູ້ຈັກ, ເຂົ້າໃຈ, ແລະການປະຕິບັດ. ຄົນທີ່ຮັກພຣະອາຈານຈະບໍ່ເອົາຕົວ ຢ່າງຂອງພຣະອົງໄດ້ຢ່າງໃດ? ພຣະພອນບໍ່ໄດ້ວັດແທນດ້ວຍຄວາມຮູ້ສຶກ. ຈະເອີ້ນວ່າຜູ້ຮັບພຣະພອນກໍເໝືອນກັບກ່າວວ່າ, "ຂໍສະແດງຄວາມຍິນດີນຳ!" ການທີ່ໄດ້ຮັບພຣະພອນຈາກພຣະເຈົ້າເປັນສິ່ງທີ່ມີຄຸນຄ່າສູງໃນຊີວິດຂອງມະນຸດເຮົາ.

**ບົດຮຽນຊີວິດ**

ການທີ່ມີຊີວິດຈິດໃຈຖ່ອມຕົວຍອມຮັບໃຊ້ຄົນອື່ນເປັນສິ່ງທີ່ຫາຍາກທີ່ສຸດໃນໂລກ. ທຸຣະກິດການຄ້າກໍໂຄສະນາເຖິງຜົນກຳໄລ. ຕົວຢ່າງທີ່ປະເສີດໂດຍບໍ່ເຫັນແກ່ຕົວກໍແມ່ນຕົວຢ່າງຂອງອົງພຣະເຢຊູ. ເຊັ່ນນີ້:

- ອົງພຣະເຢຊູໄດ້ເຮັດເປັນຕົວຢ່າງໃຫ້ພວກສາວົກ ໂດຍການລ້າງຕີນຂອງພວກເຂົາ.
- ພຣະເຢຊູໄດ້ຕີຄວາມໝາຍເຖິງເຣື່ອງຄວາມສຳຄັນໃນການລ້າງຕີນໃຫ້ເຂົາໄດ້ເຂົ້າໃຈ.
- ພຣະເຢຊູສັນຍາວ່າ ຜູ້ທີ່ເອົາຕົວຢ່າງຂອງພຣະອົງມາໃຊ້ຈະໄດ້ຮັບພຣະພອນ.

ຖ້າວ່າພຣະເຢຊູຖ່ອມຕົວລົງຮັບໃຊ້ຜູ້ອື່ນ, ທ່ານເດ່ຈະບໍ່ຍອມເຮັດບໍ່? ໃຜຈະຍອມຮັບຄົນອື່ນໃນອາທິດນີ້? ມີອັນໃດບໍ່ທີ່ທ່ານຕ້ອງເອົາຊະນະເພື່ອຈະໄດ້ເອົາຕົວຢ່າງຂອງພຣະເຢຊູມາໃຊ້ໃນຊີວິດ?

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org.,by BV.